ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່

ເລກທີ: 053 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 06 JUL 2020

06 JUL 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນໄອທີ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

**1. Server ຈຳນວນ 02 ເຄື່ອງ**

| | |
|---|---|
| Chassis Size | 2 U |
| CPU: | 32 Core (Speed: 2.6 GHz, 16 cores per CPU) X86 |
| RAM | 512 GB |
| Storage | 1TB SAS 15k x4 (RAID 6) |
| Network Card PCI 10 GE SFP+ include Transceiver Module, include cables | x4 PCIe 3.0 Cards, 2 Ports / PCI Card (Total: 8 port ) |
| FC Storage Card HBA auto-negotiate 16 32 Gbps include Transceiver Module, include cables | x4 PCIe 3.0 Cards, 2 Ports / PCI Card (Total: 8 port ) |
| MA | 3 years ( Hardware + Software ) BCEL ສາມາດເປີດ case online ເອງ ແລະ ຮັບຄຳປຶກສາ ກັບເຈົ້າຂອງຜະລິດຕະພັນໄດ້ ( Direct support ) |

**2. Server ຈຳນວນ 06 ເຄື່ອງ:**

| | |
|---|---|
| Brand | Fujitsu, Huawei, Lenovo |
| Chassis Size | 2 U |
| CPU | 4 Sockets<br>Intel Xeon Platinum 8268(2.9GHz/24-Core/35.75MB/205W)<br>Cascade lake Processor |
| RAM | 2 TB |
| Internal Storage include RAID Card (Raid 6) | x4 SSD 480 GB, SATA |
| Network Card PCI 10 GE SFP+ include Transceiver Module | x4 PCIe 3.0 Cards, 2 Ports / PCI Card (Total: 8 port ) |
| Network 10GE Cable 10 meters | 8 |
| FC Storage Card HBA auto-negotiate 16 – 32 Gbps include Transceiver Module | x4 PCIe 3.0 Cards, 2 Ports / PCI Card (Total: 8 port ) |
| FC Storage Cable 10 meters | 8 |
| Power Supplies | 2 |
| Power Cord 1.5 meters | C13 - C14 |
| MA | 3 years ( Hardware + Software ) BCEL ສາມາດເປີດ case online ເອງ ແລະ ຮັບຄຳປຶກສາ ກັບເຈົ້າຂອງຜະລິດຕະພັນໄດ້ ( Direct support ) |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

### 3. Flash storage ຈຳນວນ 01 ເຄື່ອງ:

ສຳລັບ flash storage ເຫັນດີໃຫ້ມີ 2 ຍີ່ຫໍ້ ເພື່ອມາສົມທຽບລາຄາ ຄື:

### 3.1 ຍີ່ຫໍ້ Huawei

| | |
|---|---|
| Brand | Huawei |
| Model | OceanStor Dorado 5000 V6 |
| Controller | 2 |
| Cache | 512 GB |
| Drive Type | 7.68 TB NVMe ssd |
| Drive Amount | 24 |
| Support RAID | RAID-TP |
| Protocol | FC, iSCSI |
| Network Card 10 GE SFP+ include Transceiver Module | x4 PCI Cards, 4 Ports / PCI Card (Total: 16 port ) |
| Network 10GE Cable 12 meters | 16 |
| FC Storage Card HBA 16 Gbps include Transceiver Module | x4 PCI Cards, 4 Ports / PCI Card (Total: 16 port ) |
| FC Storage Cable 12 meters | 16 |
| Power Supplies | 2 |
| Power Cable 1.5 meters | C13 - C14 |
| Feature + License | Deduplication, Compress, Snapshot, Clone, Remote Replicate, Virtualization |
| Hi-Care + MA | 3 years |

### 3.2 ຍີ່ຫໍ້ IBM Flash 9100

| | |
|---|---|
| Brand | IBM |
| Model | Flash System 9100 |
| Controller | 2 |
| Cache | 512 GB |
| Drive Type | 7.68 TB NVMe |
| Drive Amount | 24 |
| Support RAID | Distributed RAID |
| Protocol | FC, iSCSI |
| Network Card 10 GE SFP+ include Transceiver Module | x4 PCI Cards, 4 Ports / PCI Card (Total: 16 port ) |
| Network 10GE Cable 12 meters | 16 |
| FC Storage Card HBA 16 Gbps include Transceiver Module | x4 PCI Cards, 4 Ports / PCI Card (Total: 16 port ) |
| FC Storage Cable 12 meters | 16 |
| Power Supplies | 2 |
| Power Cable 1.5 meters | C13 - C14 |
| Feature + License | Deduplication, Compress, Snapshot, Clone, Remote Replicate, External Storage |
| Support + MA | 3 years |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 05 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີລ່າສຸດ, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ, ປະເທດທີ່ຜະລິດອຸປະກອນໄອທີ (SERIES) ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບວັນທີ 16/07/2020 ເວລາ 09:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>.**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນທີ 24/07/2020 ເວລາ 10:00 ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, Hardware & Software ຕ່າງໆ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ. ການຈັດຊື້ແມ່ນຈະເລືອກເອົາຍີ່ຫໍ້ໃດໜຶ່ງເທົ່ານັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/08/2020) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.

* ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ..

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ບັນທະລາດ ແກ້ວປະເສີດ**